# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 20 ກັນຍາ 2009 (9-20-2009)

### ສິ່ງທີ່ຂັດຂວາງຕໍ່ການຮູ້ຈັກກັບພຣະເຢຊູ

**ຂໍ້ພຣະຄັມພີໃນບົດຮຽນ:** ມະຣະໂກ 6:1-6,45-52; 7:8-9,13

### ບົດຮຽນນີ້ມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ຈະຊ່ວຍທ່ານໃຫ້ໄດ້ຊັຍຊະນະກັບສິ່ງທີ່ທ້າທາຍທີ່ບໍ່ສາມາດຫຼີກລ້ຽງໄດ້ໃນການຕິດຕາມພຣະເຢຊູ.

### ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ມາຣະໂກໄດ້ບັນລະຍາຍເຖິງການເຕີບໂຕຂອງການທ້າທາຍໃນການປະຕິບັດງານຂອງພຣະເຢຊູ; ຊາວບ້ານເກີດເມືອງນອນຂອງພຣະອົງກໍໄດ້ປະຕິເສດພຣະອົງ, ພວກສາວົກກໍຢ້ານກົວພຣະອົງ, ແລະຂບວນການຈັດຕັ້ງທາງສາສນາກໍບໍ່ໝັ້ນໃຈໃນພຣະອົງ.

### ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ຄຣິສຕຽນເຖິງກະສຽນທີ່ຮັບໃຊ້ພຣະເຈົ້າ, ພວກເຂົາກໍປະເຊີນກັບການກີດຂວາງຫຼາຍຢ່າງ. ເໝືອນດັ່ງທີ່ພຣະເຢຊູໄດ້ຖືກປະຕິເສດຈາກຊາວບ້ານເກີດເມືອງນອນຂອງພຣະອົງ, ພວກຄຣິສຕຽນກໍອາດຈະປະເຊີນກັບການປະຕິເສດຈາກຄອບຄົວ, ພວກໝູ່ຄູ່, ພວກຄຸ້ມບ້ານ, ແລະສະຖານທີ່ເຮັດວຽກການ. ພວກເຂົາອາດຈະມີປະສົບການກັບຄວາມຢ້ານກົວທີ່ຄ້າຍຄືກັບປະສົບການຂອງພວກສາວົກພຣະເຢຊູ. ໃນຖານະທີ່ເປັນຄຣິສຕຽນເອົາພຣະທັມຄັມພີມາປະກອບໃຊ້ໃນຊີວິດ, ພວກເຂົາກໍອາດຈະພົບສິ່ງທ້າທາຍບາງຢ່າງຊຶ່ງເຄີຍມີມາແລ້ວໃນຮີດຄອງຂອງສາສນາ.

ທິມ ເປັນນັກທຸຣະກິດທີ່ປະສົບຜົນສຳເຣັດຜູ້ນຶ່ງ ບໍ່ໄດ້ນຶກມາກ່ອນວ່າການຮັບເອົາພຣະເຢຊູຈະເຮັດໃຫ້ຊີວິດຖືກປ່ຽນແປງ. ລາວໄດ້ຢຸດເຊົາໄປບາຣ໌ກັບພວກລູກຄ້າແລະບໍ່ໄດ້ຢຸດແວ່ເພື່ອດື່ມເຫຼົ້າກ໊ອກນຶ່ງສອງກ໊ອກຫຼັງຈາກໝົດວຽກແລ້ວ. ພວກລູກຄ້າບາງຄົນກໍນຳທຸຣະກິດຂອງເຂົາໄປທີ່ອື່ນ. ເພື່ອນຮ່ວມງານສອງສາມຄົນກໍຢາກຫຼີກລ້ຽງລາວ. ແຕ່ວ່າ, ຄອບຄົວຂອງລາວຮັກທິມຄົນໃໝ່. ພຣະເຢຊູໄດ້ເຮັດໃຫ້ມີຄວາມແຕກຕ່າງໄປຈາກສິ່ງທີ່ພວກເຂົາມັກ.

ພຣະເຢຊູໄດ້ຕັກເຕືອນພວກສາວົກຂອງພຣະອົງວ່າ ພວກທີ່ກຽດຊັງພຣະອົງນັ້ນແຫຼະຈະກຽດຊັງພວກເຂົາດ້ວຍ. ພຣເຢຊູໄດ້ໃຫ້ຕົວຢ່າງແກ່ພວກເຮົາໃນການຮັບມືກັບຄວາມຢ້ານກົວ, ການປະຕິເສດ, ແລະຮີດຄອງປະເພນີ.

### <u>ສຶກສາພຣະຄັມພີ</u>

**1. <u>ປະເຊີນກັບການປະຕິເສດ</u>** (ມາຣະໂກ 6:1-6)

ພວກສາວົກຂອງພຣະເຢຊູໄດ້ໄປເປັນເພື່ອນກັບພຣະອົງຊຶ່ງເປັນບ່ອນທີ່ຄວນຈະເປັນໄດ້ຊັຍຊະນະຫຼັງຈາກການກັບມາຈາກເມືອງກາເປນາອູມຫຼັງຈາກໄດ້ເຮັດໃຫ້ລູກສາວຂອງຢາອີໂຣເປັນຄືນມາຈາກຕາຍ. ພວກເຂົາບໍ່ໄດ້ຕຽມພ້ອມທີ່ຈະກ່າວທັກທາຍກັບເຈົ້ານາຍຂອງພວກເຂົາເພາະຂາດຄວາມຕື່ນເຕັ້ນ. ໝົດທັງກຸ່ມໄດ້ພາກັນຄ້າງຢູ່ນາຊາເຣັດເປັນເວລາ

ຫຼາຍມື້ເມື່ອ**ວັນຊະບາໂຕວຽນມາຄົບຮອບ**. ໃນການສືບຕໍ່ຕາມການປະພຶດປົກກະຕິຄືເຂົ້າຮ່ວມນະມັສການພຣະເຈົ້າ, ພຣະເຢຊູກໍໄດ້ໄປທີ່**ໂຮງທັມມະເທສນາ**. ພວກຄົນຜູ້ທີ່ຮູ້ເຫັນການເຕີບໃຫຍ່ຂອງພຣະເຢຊູກໍໄດ້ຍິນເຖິງເຣື່ອງພຣະອົງ ກໍຫຸ້ມມາທີ່ໂຮງທັມມະເທສນາເພື່ອຢາກຟັງແລະຢາກເຫັນພຣະອົງ.

ຫົວໜ້າໂຮງທັມໄດ້ເຊີນພຣະເຢຊູໃຫ້ອ່ານພຣະທັມແລະອະທິບາຍເນັ້ນໃຫ້ເຂົ້າໃຈ. ເມື່ອພຣະອົງເລີ້ມຕົ້ນ**ສິດສອນ**ຄົນໃນທີ່ຊຸມນຸມນັ້ນກໍພາກັນປລາດໃຈ. ພວກຄົນຟັງກໍຖາມຊຶ່ງກັນແລະກັນວ່າພຣະເຢຊູໄດ້**ສະຕິປັນຍາ**ແລະຄວາມສາມາດໃນການ**ເຮັດການອັສຈັນ**ຢ່າງນີ້ມາແຕ່ໃສ. ພວກຄົນກໍຮູ້ຢູ່ວ່າພຣະເຢຊູໄດ້ຖືກຊຸບລ້ຽງໂດຍໂຢເຊບ. ພວກເຂົາຄາດຄິດເອົາໄວ້ວ່າພຣະເຢຊູໄດ້ສືບຕໍ່ອາຊີບຂອງໂຢເຊບ, ດັ່ງນັ້ນພວກເຂົາຈຶ່ງຮູ້ຈັກພຣະອົງວ່າເປັນ**ຊ່າງໄມ້**. ພວກເຂົາຍັງໄດ້ຮູ້ຈັກ**ມາຣີອາ**, ແມ່ພຣະເຢຊູ, ແລະພວກນ້ອງຊາຍແລະພວກ**ນ້ອງສາວ**ຂອງພຣະອົງ.

ການມີອາຈານມາຢັ້ງມຢາມສິດສອນຢ່າງກ້າຫານ, ຄວາມຈິງອັນໃໝ່ມັນກໍເປັນອີກເຣື່ອງນຶ່ງ; ການມີເດັກໃນຄຸ້ມບ້ານດຽວກັນໄດ້ເຮັດຢ່າງນີ້ມັນກໍເປັນອີກເຣື່ອງໃໝ່. ພວກຜູ້ຟັງເກີດໜ່າຍແໜງຕໍ່ການສິດສອນຂອງພຣະເຢຊູ. ການປະພຶດຂອງພວກເຂົາຊີ້ໃຫ້ເຫັນກ່ຽວກັບການເປັນເດັກນ້ອຍຝ່າຍຈິດວິນຍານຂອງພວກເຂົາ. ພຣະເຢຊູເຂົ້າໃຈດີວ່າຜູ້ປະກາດພຣະທັມບໍ່ໄດ້ຮັບກຽດໃນຖ້າມກາງພວກຄົນທີ່ຮູ້ຈັກກັນດີທີ່ສຸດ-ຍາດຕິພີ່ນ້ອງແລະຄົນໃນຄອບຄົວດຽວກັນກັບລາວ. ຂໍ້ພຣະຄັມພີໃນບ່ອນອື່ນຊີ້ໃຫ້ເຫັນວ່າແມ້ແຕ່ພວກນ້ອງຊາຍຂອງພຣະເຢຊູເອງກໍບໍ່ໂຕ້ຕອບໃນທາງດີຕໍ່ການຮັບໃຊ້ພຣະເຈົ້າຂອງພຣະອົງ.

ເນື່ອງຈາກຜົນຂອງຄວາມບໍ່ເຊື່ອຖືຂອງໝູ່ປະຊາຊົນ, ພຣະເຢຊູບໍ່ໄດ້ສຳແດງການອັສຈັນໃນນາຊາເຣັດຄືກັບໃນເມືອງອື່ນໆ; ພວກເຂົາຂາດພຣະພອນຂອງພຣະອົງ. ເຖິງປານນັ້ນ, ພຣະເຢຊູຍັງປິ່ນປົວສອງສາມຄົນໃຫ້ຫາຍພຣະຍາດ. ຂນະທີ່ພຣະເຢຊູກໍຍັງງຶດງໍ້ກັບການຂາດຄວາມເຊື່ອທີ່ອ້ອມຮອບພຣະອົງ, ພຣະອົງກໍບໍ່ໄດ້ປະຕິເສດໃນການແຕະຕ້ອງສອງສາມຊີວິດທີ່ມາຫາພຣະອົງ.

ການຖືກປະຕິເສດທີ່ເມືອງນາຊາເຣັດ, ພຣະເຢຊູກໍໄດ້ນຳເອົາການສິດສອນຂອງພຣະອົງໄປຫາໝູ່ບ້ານຕ່າງໆຢູ່ອ້ອມຂ້າງແຖວນັ້ນ, ໂດຍການໃຊ້ບ້ານເກີດເມືອງນອນເປັນສູນກາງໃນການຕິດຕໍ່ໄປມາຫາສູ່. ພຣະອົງບໍ່ໄດ້ບັງຄັບໃຫ້ພວກຄົນທີ່ບໍ່ເຊື່ອໃນພຣະອົງ, ແຕ່ວ່າໄດ້ອອກໄປຫາຜູ້ອື່ນທີ່ເປີດໃຈຕ້ອນຮັບເອົາການຮັບໃຊ້ຂອງພຣະອົງ.

ພວກທີ່ມີຄວາມເຊື່ອໃນສມັຍນີ້ກໍອາດຈະປະສົບກັບການປະຕິເສດຈາກພວກທີ່ຮູ້ຈັກພວກເຂົາດີທີ່ສຸດ. ເຖິງປານນັ້ນພວກເຮົາຍັງສາມາດສືບຕໍ່ບົວລະບັດກັບພວກທີ່ເປັນພຍານການປ່ຽນແປງຂອງພຣະຄຣິດໃນຊີວິດຂອງພວກເຮົາ. ບາງທີໂດຍການເບິ່ງພຣະເຢຊູກະທຳການໃນພວກເຮົາຢ່າງໃດ, ພວກເຂົາກໍອາດຈະຫຼີກເວັ້ນການທັກທ້ານພຣະພອນຂອງພຣະເຈົ້າໂດຍການຂາດຄວາມເຊື່ອຂອງພວກເຂົາ.

## 2. <u>ເອົາຊະນະຄວາມຢ້ານກົວ</u> (ມາຣະໂກ 6:45-52)

ການຕິດຕາມການຮັບໃຊ້ຂອງພຣະເຢຊູອ້ອມແອ້ມເຂດເມືອງນາຊາເຣັດ, ພຣະອົງໄດ້ສົ່ງພວກສາວົກຂອງພຣະອົງອອກໄປຮັບໃຊ້ໃນພຣະນາມຂອງພຣະອົງ. ຕໍ່ຈາກນັ້ນບໍ່ເຖິງ, ພຣະເຢຊູໄດ້ເອົາພວກເຂົາອອກໄປພັກຜ່ອນ, ແຕ່ວ່າພວກຝູງຄົນກໍແລ່ນຊອກຫາພຣະອົງ. ພຣະເຢຊູໄດ້ຊົງລ້ຽງເກືອຄົນກ່ວາຫ້າພັນຄົນ (ບວກທັງຜູ້ຍິງແລະເດັກນ້ອຍ) ດ້ວຍເຂົ້າຈີ່ສອງສາມກ້ອນແລະປາສອງສາມໂຕ. ພວກສາວົກຕ້ອງການບົດຮຽນຝ່າຍຈິດວິນຍານອັນເລິກກວ່າເກົ່າເພື່ອຈັດຕຽມພວກເຂົາໃນການຮັບໃຊ້ໃນອານາຄົດ. ກວດເບິ່ງວ່າແມ່ນຫຍັງແດ່ທີ່ພວກສິບສອງຄົນນັ້ນໄດ້ປະເຊີນຜ່ານມາແລ້ວ:

- ພວກເຂົາຂັບໄລ່ຜີຮ້າຍອອກໄດ້ຢ່າງສຳເຣັດ.
- ພວກເຂົາໄດ້ມີສ່ວນໃນການເຮັດໃຫ້ຄົນເຈັບປ່ວຍໃຫ້ຫາຍດີ.
- ມີຝູງຄົນມາຫາພວກເຂົາຢ່າງຫຼວງຫຼາຍຈົນພວກເຂົາບໍ່ມີເວລາກິນເຂົ້າ.

- ພວກເຂົາມີສ່ວນຊ່ວຍລ້ຽງເກືອຝູງຄົນຫຼວງຫຼາຍດ້ວຍເຂົ້າຈີ່ພຽງຫ້າກ້ອນແລະປາສອງໂຕ.

ພວກສາວົກກໍພາດເປົ້າໝາຍອັນສໍາຄັນໃນຄໍາສອນຂອງພຣະເຢຊູຝ່າຍຈິດວິນຍານ ໂດຍເລັງໃສ່ແຕ່ການອັສຈັນຝ່າຍເນື້ອກາຍ. **ທັນໃດນັ້ນ**ພຣະເຢຊູໄດ້ບອກໃຫ້ພວກສາວົກຂຶ້ນ**ເຮືອ**ຂ້າມໄປອີກຟາກນຶ່ງຂອງທະເລຄາລີເລ, ແຕ່ພຣະເຢຊູມີແຜນການອີກຢ່າງອື່ນ. ອັນທີນຶ່ງ, ພຣະເຢຊູໄດ້ຈາກລາ**ຝູງຄົນ**ທີ່ຕ້ອງການຢາກໃຫ້ພຣະອົງຢູ່ທີ່ນັ້ນແລະເຮັດການອັສຈັນຕື່ມອີກ. ອີກຫຼາຍໆຄົນຍັງຢາກກິນອາຫານຟຣີ. ອັນທີສອງ, ພຣະເຢຊູບໍ່ໄດ້ຂ້າມຟາກໄປກັບພວກສາວົກໂລດ, ແຕ່ໄດ້ໄປ**ທີ່ພູ**ຊຶ່ງຢູ່ໃກ້ຽງນັ້ນເພື່ອ**ອະທິຖານໄຫວ້ວອນ**. ພຣະເຢຊູຕັ້ງສິ່ງທີ່ສໍາຄັນໄວ້ເປັນຕົວຢ່າງເພື່ອພວກເຮົາຈະໄດ້ຮຽນຕາມແບບຢ່າງ.

ໃນ**ຕອນຄໍ່າ**ຂອງມື້ນັ້ນພວກສາວົກກໍໄດ້ເດີນທາງຮອດ**ກາງທະເລ**. ທະເລຄາລີເລມີຄວາມຍາວປະມານ 12 13 ໄມລ໌ແລະກ້ວາງປະມານ 8 ໄມລ໌. ພວກສາວົກໄດ້ພາກັນລ່ອງເຮືອຫຼາຍຊົ່ວໂມງຂນະທີ່ພຣະເຢຊູອະທິຖານອ້ອນວອນ. ພຣະເຢຊູ**ໄດ້ເຫັນ**ພວກສາວົກ; ຕອນນັ້ນກໍາລັງມືດ, ແຕ່ພຣະເຢຊູຍັງເປັນຫ່ວງພວກເພື່ອນຂອງພຣະອົງ. **ລົມ**ກໍກໍາລັງພັດຈົນຄື້ນແຕກກະຈັດກະຈາຍ**ປະທະ**ກັບ**ເຮືອ**ຄື້ນແລ້ວຄື້ນເລົ່າ. ເຖິງແມ່ນວ່າພວກສາວົກບາງຄົນເປັນນັກຫາປາທີ່ຊໍານານຜ່ານພະຍຸຝົນມາແລ້ວກໍຕາມ, ແຕ່ເມື່ອມາເຈິກັບຄື້ນຟອງອັນໂຫດຮ້າຍນີ້ກໍເຮັດໃຫ້ຫົວໃຈສັ່ນໄປ. ໃນຂນະທີ່ກໍາລັງປັ່ນປ່ວນກັນຢູ່, **ພຣະເຢຊູ**ກໍສະເດັດ**ຍ່າງເທິງໜ້ານໍ້າທະເລ**ມາຫາພວກເຂົາ. ປໂຍກທີ່ບອກວ່າ**ພວກເຂົາຄິດວ່າເຫັນຜີ**ຊີ້ໃຫ້ເຫັນວ່າພວກເຂົາບໍ່ຮູ້ວ່າແມ່ນພຣະເຢຊູ.

**ຄວາມຢ້ານກົວ**, ເຮັດໃຫ້ພວກສາວົກຕ້ອງ**ຮ້ອງໄຫ້ອອກມາ**. ພຣະເຢຊູກໍເລີ້ມປອບໃຈ**ພວກເຂົາທັນທີ**. ຄໍາໜູນໃຈຂອງພຣະເຢຊູສໍາລັບພວກເຂົາຄືໃຫ້ມີ**ຄວາມກ້າຫານ**ໃນການປະທັບຢູ່ຂອງພຣະອົງ- **ແມ່ນເຮົາເອງ**. ຄວາມຢ້ານ ກໍຫາຍໄປເພາະວ່າ**ລົມກໍຢຸດ**ເມື່ອພຣະເຢຊູເຂົ້າໄປໃນ**ເຮືອ**, ແລະບາງທີລື່ນໄປກວ່ານັ້ນກໍຄືວ່າພຣະເຢຊູຢູ່**ກັບພວກເຂົາ**.

ພວກສາວົກພາກັນ**ຕົກຕະລຶງຢ່າງໃຫຍ່**. ແມ່ນວ່າເລື່ອງນີ້ເກີດຂຶ້ນຫຼັງຈາກການມີສ່ວນໃນການເຮັດອັສຈັນເລື່ອງ**ເຂົ້າຈີ່** (ການລ້ຽງຄົນກວ່າ 5000ຄົນ), ພວກສາວົກກໍຍັງບໍ່ເຂົ້າໃຈຢ່າງເຕັມສ່ວນກ່ຽວກັບທັມມະຊາດຂອງພຣະເຈົ້າ. ແຕ່ແທນທີ່ຈະຂອບພຣະຄຸນສໍາລັບທະເລກໍສົງບລົງແລະເຮືອກໍປອດພັຍ, **ຫົວໃຈຂອງພວກເຂົາແຫ່ງແຂງກະດ້າງ**. ປໂຍກນີ້ເລັງເຖິງຄວາມເສີຍຊ້າແລະສັບສົນຂອງພວກສາວົກ.

ຄ້າຍຄືກັນກັບພວກທີ່ມີຄວາມເຊື່ອອາດຈະຮັບຮູ້ວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ, ປານນັ້ນກໍບໍ່ຢ້ານກົວໃນການດໍາຣົງຊີວິດຂອງພວກເຂົາແລະໂຕ້ຕອບໃນທາງລົບ. ຖ້າພວກເຮົາອະນຸຍາດໃຫ້ຄວາມຢ້ານຄອບຄອງພວກເຮົາ, ພວກເຮົາອາດຈະພາດຈາກພາຣະກິດທີ່ພຣະເຢຊູກໍາລັງກະທໍາສໍາລັບພວກເຮົາແລະອ້ອມຂ້າງພວກເຮົາ. ແຕ່ວ່າ, ພວກທີ່ເຊື່ອສາມາດຄອບຄອງຄວາມຢ້ານ ເມື່ອພວກເຮົາຫາກຮັບຮູ້ການສະຖິດຢູ່ນໍາຂອງອົງພຣະເຢຊູແລະເຊື່ອວາງໃຈໃນຣິດທານຸພາບຂອງພຣະອົງ.

## 3. <u>ປະຈານພວກຖືຕາມຮີດຄອງ</u> (ມາຣະໂກ 7:8-9,13)

ພຣະເຢຊູໄດ້ປະທະກັບຝ່າຍກົງກັນຂ້າມຄືພວກຜູ້ນໍາທາງສາສນາທີ່ອ້າງຕົວຕາມຮີດເກົ່າຄອງຫຼັງ, ພິທີຕ່າງໆ, ແລະການສເລີມສລອງ. ພວກເຂົາໃສ່ໃຈຫຼາຍຕໍ່**ທໍານຽມຂອງມະນຸດ**ຫຼາຍກ່ວາ**ພຣະບັນຍັດຂອງພຣະເຈົ້າ**. ການຕໍ່ຕ້ານຂອງພວກເຂົາຕໍ່ພຣະເຢຊູແມ່ນບໍ່ມີສ່ວນກ່ຽວຂ້ອງຫຍັງກັບບັນຍັດຂອງໂມເຊ, ແຕ່ຈຸດສູນກາງຂອງມັນແມ່ນກົດຂອງວິກຂອງພຣະເຢຊູສໍາລັບການກິນເຂົ້າໂດຍບໍ່ໄດ້ທໍາພິທີລ້າງມືຂອງພວກເຂົາ. ພວກນັກຊ່ຽວຊານຝ່າຍຈິດວິນຍານເຫຼົ່ານີ້ບໍ່ໃສ່ໃຈຕໍ່**ກົດບັນຍັດຂອງພຣະເຈົ້າ**ແຕ່ກັບໄປນິຍົມ**ປະເພນີ**ຂອງພວກເຂົາ. ພຣະເຢຊູໄດ້ຊີ້ໃຫ້ເຫັນຈຸດຂອງພວກຜູ້ນໍາສາສນາເຫຼົ່ານີ້ທີ່ປະຮ້າງພວກເຂົາເອງຈາກພຣະເຈົ້າແລະຕິດຕາມທໍານຽມຂອງມະນຸດ.

ມາຣະໂກໄດ້ເປີດເຜີຍການຄືບໜ້າໃນຂໍ້ 8,9,ແລະ13: ທຳອິດ, ມະນຸດລະຖິ້ມພຣະບັນຍັດ (ຂໍ້ 8), ຫຼັງຈາກນັ້ນກໍເຮັດໃຫ້ພຣະບັນຍັດຂອງພຣະເຈົ້າໃຊ້ການບໍ່ໄດ້ (ຂໍ້ 9), ແລະສຸດທ້າຍພວກເຂົາກໍລຶບລ້າງພຣະບັນຍັດ (ຂໍ້ 13). ພວກທີ່ເຊື່ອຕ້ອງຈຳໄວ້ວ່າພຣະບັນຍັດຂອງພຣະເຈົ້າເໜືອກວ່າປະເພນີຂອງມະນຸດ. ພວກເຮົາຕ້ອງດຳຣົງຊີວິດຂອງພວກເຮົາໃຫ້ເປັນໄປຕາມພຣະບັນຍັດຂອງພຣະເຈົ້າ. ເມື່ອໃດກໍຕາມທີ່ຄົນຍົກ**ທຳນຽມປະເພນີ**ຂຶ້ນໃຫ້ເປັນມາດຕະຖານເພື່ອຕັດສິນຄົນອື່ນ, ນັ້ນແມ່ນການລຶບລ້າງ**ພຣະຄຳຂອງພຣະເຈົ້າ**. ພວກເຂົາເປັນຜູ້ເກັບກຳທຳນຽມຫຼາຍກ່ວາເປັນຄົນທີ່ຮັກພຣະເຈົ້າ. ແຕ່ໜ້າເສັຽໃຈ, ສະມາຊິກໃນຫຼາຍໆໂບດໃນສມັຍນີ້ກໍຕົກຢູ່ໃນບ້ວງແຮ້ວອັນດຽວກັນ. ພວກເຮົາກໍ ສາມາດສຸມໃຈໃສ່*ລາຍການຕ່າງໆ* ຂອງໂບດຫຼາຍກ່ວາ*ເປົ້າໝາຍ*ຂອງໂບດ.

## ບົດຮຽນຊີວິດ

ຄວາມຍາກລຳບາກເປັນສ່ວນປະກອບຂອງການຝຶກຝົນໃນການເປັນລູກສິດ. ປະເພນີມັນຕໍ່ຕ້ານພຣະຄຣິດມັນກໍຈະຕໍ່ຕ້ານພວກຄຣິສຕຽນທີ່ດຳເນີນຊີວິດຕາມຄວາມເຊື່ອຂອງພວກເຂົາເຊັ່ນກັນ. ພວກທີ່ມີຄວາມເຊື່ອບໍ່ມີທາງເລືອກທີ່ຈະເປັນຜູ້ເຊື່ອແບບສາຍລັບ, ໃນຄວາມຫວັງວ່າຈະລອດຈາກສາຍຕາຂອງພວກທີ່ປະຕິເສດພຣະເຢຊູ. ເມື່ອໃດກໍຕາມທີ່ທ່ານເວົ້າເຖິງເຣື່ອງພຣະຄຣິດ, ທ່ານຈະມີປະສົບການກັບການປະຕິເສດອັນດຽວກັນກັບທີ່ພຣະເຢຊູໄດ້ປະເຊີນຜ່ານມາແລ້ວນັ້ນ. ບາງທີທ່ານອາດຈະຕ້ອງປະນາມທຳນຽມປະເພນີທີ່ຕັ້ງຂຶ້ນໂດຍມະນຸດທີ່ມັນຈະເຊື່ອງຄວາມສັດຊື່ຂອງທ່ານທີ່ມີຕໍ່ພຣະເຢຊູ. ຄວາມຢ້ານຕໍ່ການຖືກປະຕິເສດພ້ອມທັງຢ້ານຕໍ່ມໍຣະສຸມຂອງບັນຫາຕ່າງໆທີ່ພັດມາປະທະກັບເຮືອແຫ່ງຄວາມເຊື່ອຂອງທ່ານ.

ທ່ານສາມາດຢືນຢັດຢ່າງຊັດຈິງຕໍ່ພຣະຜູ້ເປັນເຈົ້າຂອງທ່ານໃນຣິດເດດຂອງພຣະວິນຍານຂອງພຣະອົງ. ພຣະເຢຊູຈະປະທານພຣະຄຸນແລະກຳລັງເພື່ອພວກເຮົາຈະຢູ່ເພື່ອພຣະອົງແມ້ວ່າຈະຢ້ານຕໍ່ການຖືກປະຕິເສດ. ຈົ່ງໃຊ້ເວລາຈັກສອງສາມນາທີຄິດເຖິງວິທີທີ່ທ່ານໄດ້ກະທຳຕໍ່ເຫດການແບບນີ້ທີ່ຜ່ານມາ. ຍັງຈື່ໄດ້ບໍ່ທີ່ພຣະເຢຊູໄດ້ຊ່ວຍທ່ານໃຫ້ມີຄວາມອົດທົນດົນນານ. ຖ້າຫາກວ່າທ່ານສອບຕົກໃນກໍຣະນີອັນໃດອັນນຶ່ງ, ຈົ່ງຊອກຫາວິທີແບບອື່ນ. ຖ້າວ່າທ່ານຫາກຢືນໝັ້ນຄົງສັດຊື່ໃນພຣະອົງ, ຊີວິດຂອງທ່ານຈະເປັນຢ່າງໃດ? ແລະພວກຄົນທີ່ຢູ່ອ້ອມຮອບທ່ານຈະເປັນຢ່າງໃດ?

ເໝືອນດັ່ງທົມທີ່ໄດ້ໂຕ້ຕອບຕໍ່ພຣະເຢຊູໂດຍການປ່ຽນແປງວິຖີຊີວິດຂອງລາວ, ລາວໄດ້ສູນເສັຽລູກຄ້າບາງຄົນແລະຄວາມເປັນເພື່ອນກັບເພື່ອນຮ່ວມງານບາງຄົນເພາະວ່າຄວາມຈົງຮັກພັກດີຂອງລາວທີ່ມີຕໍ່ພຣະຄຣິດ. ເຖິງປານນັ້ນ, ການຕັດສິນໃຈຂອງລາວຕໍ່ພຣະເຢຊູເປັນແຮງກະຕຸ້ນໃນທາງທີ່ລາວທຳທຸຣະກິດກັບຄົນ, ລາວໄດ້ຄົ້ນພົບເຫັນການນັບຖືແບບໃໝ່ຈາກຄົນອື່ນໆ, ລວມທັງຄອບຄົວຂອງລາວດ້ວຍ. ໂອກາດໃໝ່ແລະດີກ່ວາເກົ່າໃນການທຳທຸຣະກິດກໍເຂົ້າຂ້າງລາວຢ່າງບໍ່ຄາດຝັນເພາະພຣະເຈົ້າຊາບຄວາມຕ້ອງການຂອງຄອບຄົວຂອງລາວ. ການຕິດຕາມພຣະຄຣິດບໍ່ແມ່ນຂອງງ່າຍ, ແຕ່ວ່າຜູ້ທີ່ຮັກພຣະເຢຊູຈະຢູ່ເພື່ອພຣະອົງເຖິງແມ່ນວ່າຈະຕ້ອງເສັຽຄ່າແພງກໍຕາມ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA